ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ...418..../ຖວທ

ນະຄອນຫລວງວຽງຈັນ, ວັນທີ 06 ພຶດສະພາ 2024

# ຂໍ້ຕົກລົງ
# ວ່າດ້ວຍມາດຕະຖານ
# ບ້ານວັດທະນະທຳຕົວແບບ, ກົມ, ກອງ,
# ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ

- ອີງຕາມ ດຳລັດວ່າດ້ວຍການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ ສະບັບເລກທີ 123/ລບ, ລົງວັນທີ 16 ກຸມພາ 2021;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມສິລະປະ-ວັດທະນະທຳ ສະບັບເລກທີ 316 /ສວທ, ລົງວັນທີ 08 ເມສາ 2024.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ແມ່ນຜັນຂະຫຍາຍ ເນື້ອໃນມາດຕະຖານລວມ ຂອງດຳລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທຳ ສະບັບເລກທີ 123/ລບ, ລົງວັນທີ 16 ກຸມພາ 2021 ມາກຳນົດເປັນມາດຕະຖານ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ ເພື່ອເປັນບ່ອນອີງໃຫ້ແກ່ ຂະແໜງວັດທະນະທຳ ໃນການຈັດຕັ້ງປະຕິບັດເປັນເອກະພາບກັນໃນທົ່ວປະເທດ.

### ມາດຕາ 2 ການສ້າງບ້ານວັດທະນະທຳຕົວແບບ ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ

1. ບ້ານວັດທະນະທຳຕົວແບບ ແມ່ນບ້ານວັດທະນະທຳ ທີ່ໄດ້ຮັບການຢັ້ງຢືນເປັນບ້ານວັດທະນະທຳຕົວແບບໃດໜຶ່ງ ເປັນຕົ້ນແມ່ນ ຕົວແບບດ້ານ ປະຫວັດສາດ, ທຳມະຊາດ, ວັດທະນະທຳ ບົນພື້ນຖານການກວດກາ ແລະ ປະເມີນຜົນ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້;

2. ກົມ, ກອງ, ສໍານັກງານ, ອົງການ ວັດທະນະທໍາ ແມ່ນກົມ, ກອງ, ສໍານັກງານ, ອົງການ ທີ່ໄດ້ຮັບການຢັ້ງຢືນເປັນ ກົມ, ກອງ, ສໍານັກງານ ແລະ ອົງການ ວັດທະນະທໍາ ບົນພື້ນຖານການ ກວດກາ ແລະ ປະເມີນຜົນຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

3. ເມືອງ, ນະຄອນ, ເທດສະບານ ວັດທະນະທໍາ ແມ່ນເມືອງ, ນະຄອນ, ເທດສະບານ ທີ່ໄດ້ຮັບການຢັ້ງຢືນເປັນ ເມືອງ, ນະຄອນ, ເທດສະບານ ວັດທະນະທໍາ ບົນພື້ນຖານການ ກວດກາ ແລະ ປະເມີນຜົນຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ມາດຕະຖານບ້ານວັດທະນະທໍາຕົວແບບ, ກົມ, ກອງ, ສໍານັກງານ, ອົງການ, ເມືອງ, ນະຄອນ ແລະ ເທດສະບານ ວັດທະນະທໍາ

### ມາດຕາ 3 ມາດຕະຖານບ້ານວັດທະນະທໍາຕົວແບບ

ບ້ານວັດທະນະທໍາຕົວແບບ ເຂດຕົວເມືອງໃຫຍ່ ຕ້ອງບັນລຸ ເກົ້າສິບສ່ວນຮ້ອຍ ຂຶ້ນໄປ, ເຂດຊົນນະບົດ (ທົ່ງພຽງ) ຕ້ອງບັນລຸ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ, ເຂດຊົນນະບົດ (ພູດອຍ) ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານບ້ານວັດທະນະທໍາຕົວແບບ ມີ ດັ່ງນີ້:

1. ບ້ານວັດທະນະທໍາທີ່ໄດ້ຮັບການປະເມີນຜົນ ສາມ ປີຕໍ່ເນື່ອງ;
2. ຄອບຄົວວັດທະນະທໍາ ກວມເອົາ ເກົ້າສິບສ່ວນຮ້ອຍຂຶ້ນໄປ;
3. ບ້ານທີ່ໄດ້ຮັບນາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມ ປີຕໍ່ເນື່ອງ;
4. ບ້ານທີ່ໄດ້ຮັບນາມມະຍົດຕົວແບບໃດໜຶ່ງ ໃນຂະບວນແຂ່ງຂັນ ຮັກຊາດ ແລະ ພັດທະນາ;
5. ບ້ານຕ້ອງມີການອະນຸລັກຮັກສາສິ່ງແວດລ້ອມ ເປັນຕົ້ນ ປູກຕົ້ນໄມ້, ດອກໄມ້ ປະດັບປະດາ ຕາມເສັ້ນທາງ ແລະ ພູມພາບຂອງບ້ານສະອາດ ມີຫຼາກຫຼາຍສີສັນ ແລະ ເປັນເອກະລັກສະເພາະ;
6. ບ້ານຕ້ອງມີທ່າແຮງດ້ານໃດໜຶ່ງ ໃນການທ່ອງທ່ຽວທາງດ້ານ ປະຫວັດສາດ, ທໍາມະຊາດ ແລະ ວັດທະນະທໍາ ທີ່ໄດ້ຮັບຄວາມນິຍົມ, ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວ;
7. ປະຊາຊົນພາຍໃນບ້ານຕ້ອງມີສ່ວນຮ່ວມໃນທຸກໆກິດຈະກໍາທີ່ບ້ານຈັດຂຶ້ນ;
8. ການເຄື່ອນໄຫວກິດຈະກໍາວັດທະນະທໍາ ວາງສະແດງຜະລິດຕະພັນຕ່າງໆ ທີ່ພິພິທະພັນມູນເຊື້ອ, ສະໂມສອນວັດທະນະທໍາ ຫຼື ສະຖານທີ່ອື່ນໆ;
9. ກໍານົດການນຸ່ງຖືແຕ່ງກາຍ ທີ່ເປັນເອກະລັກສະເພາະຂອງປະຊາຊົນໃນວັນສໍາຄັນ ແລະ ບຸນປະເພນີພາຍໃນບ້ານ;
10. ມີຜະລິດຕະພັນ ທີ່ເປັນເອກະລັກສະເພາະຂອງປະຊາຊົນ ເປັນຕົ້ນ ອາຫານພື້ນເມືອງ, ສິນຄ້າກະສິກໍາ, ຫັດຖະກໍາ ແລະ ສາມາດຈໍາໜ່າຍ ຫຼື ມີບ່ອນສາທິດ;
11. ບ້ານຕ້ອງມີເຮືອນພັກແຮມ ຫຼື ໂຮມສະເຕ ໜຶ່ງ ຫຼັງຂຶ້ນໄປ;

**ມາດຕາ 4 ມາດຕະຖານ ກົມ, ກອງ, ສຳນັກງານ ແລະ ອົງການ ວັດທະນະທຳ**

ກົມ, ກອງ, ສຳນັກງານ ແລະ ອົງການ ວັດທະນະທຳ ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຕາມ ມາດຕະຖານ ດັ່ງນີ້:

1. ພະນັກງານ-ລັດຖະກອນ ຕ້ອງກຳແໜ້ນ ແນວທາງ ນະໂຍບາຍ ຂອງພັກ, ກົດໝາຍ, ລະບຽບການ ຕ່າງໆ ປະຕິບັດຢ່າງເຂັ້ມງວດ ກວມເອົາ ເກົ້າສິບຫ້າສ່ວນຮ້ອຍ ຂຶ້ນໄປ;

2. ມີສະມາຊິກພັກ ກວມເອົາ ເຈັດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງພະນັກງານ-ລັດຖະກອນ ທັງໝົດ;

3. ພະນັກງານ-ລັດຖະກອນ ໃນກົມ ກອງ, ສຳນັກງານ, ອົງການ ຕ້ອງປະຕິບັດລະບຽບຂອງພັກ, ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ຢ່າງເຂັ້ມງວດ ແລະ ໄດ້ຮັບນາມມະຍົດຕິດພັນກັບຂະບວນການ ຕ່າງໆ ເປັນຕົ້ນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມ ປີຕໍ່ເນື່ອງ ແລະ ຂະບວນແຂ່ງຂັນ ຮັກຊາດ ແລະ ພັດທະນາ;

4. ພະນັກງານ-ລັດຖະກອນ ປະຕິບັດການເຄື່ອນໄຫວວຽກງານ, ການເຮັດວຽກມີປະສິດທິພາບ, ປະ ສິດທິຜົນ, ການນຳໃຊ້ງົບປະມານຂອງລັດ ລາຍຮັບ-ລາຍຈ່າຍ ໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ, ເອົາໃຈໃສ່ຕ້ານປະກົດການຫຍໍ້ທໍ້, ບໍ່ສໍ້ລາດບັງຫຼວງ, ບໍ່ຫຼິ້ນກິນຟູມເຟືອຍ ເປັນຕົ້ນ ການຈັດງານດອງ, ງານຊາ ປະນະກິດສົບ ແລະ ງານບຸນຕ່າງໆ;

5. ມີກິດຈະກຳວັດທະນະທຳ ເຄື່ອນໄຫວເປັນປົກກະຕິ ເປັນຕົ້ນ ສູນຂໍ້ມູນຂ່າວສານ, ຫໍຂ່າວ, ໜ່ວຍ ສິລະປະວັນນະຄະດີ;

6. ພະນັກງານ-ລັດຖະກອນ ຫ້າມໂຄສະນາເຜີຍແຜ່ ວັດທະນະທຳ ທີ່ເປັນພິດໄພຕໍ່ສັງຄົມ ເປັນຕົ້ນ ການຂີດຂຽນ ທີ່ເຊື່ອມເສຍໃຫ້ແກ່ປະເທດຊາດ;

7. ພະນັກງານ-ລັດຖະກອນ ແຕ່ງກາຍສຸພາບຮຽບຮ້ອຍ ແລະ ຫ້າມ ສູບຢາ, ດື່ມເຄື່ອງດື່ມທີ່ມີທາດ ເຫຼົ້າ ຢູ່ໃນສະຖານທີ່ຫ້ອງເຮັດວຽກ;

8. ກົມ, ກອງ, ສຳນັກງານ, ອົງການ ຕ້ອງມີຄວາມສະຫງົບປອດໄພ, ຄວາມສະອາດ ແລະ ຈັບງາມ ຕາມທິດສີຂຽວຍືນຍົງ;

9. ການດຳລົງຊີວິດປອດໃສໃນກົມ, ກອງ, ສຳນັກງານ, ອົງການ ຕ້ອງປະຕິບັດໄດ້ດີ ເປັນຕົ້ນ ແບບແຜນ ວິທີເຮັດວຽກ, ລວມສູນປະຊາທິປະໄຕ, ສາມັກຄີພາຍໃນ ແລະ ພາຍນອກ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ;

10. ພະນັກງານ-ລັດຖະກອນ ຕ້ອງໄດ້ຍົກລະດັບທິດສະດີການເມືອງ-ການປົກຄອງ ຫຼື ວິຊາສະເພາະ ກວມເອົາ ເຈັດສິບຫ້າ ສ່ວນຮ້ອຍ ຂຶ້ນໄປ;

11. ຍົກສູງຄຸນນະພາບການຈັດຕັ້ງປະຕິບັດວຽກງານບໍລິການວ່ອງໄວ ແລະ ທັນສະໄໝ.

**ມາດຕາ 5 ມາດຕະຖານ ເມືອງ, ນະຄອນ ແລະ ເທດສະບານ ວັດທະນະທຳ**

ເມືອງ, ນະຄອນ ແລະ ເທດສະບານ ວັດທະນະທຳ ຕ້ອງບັນລຸ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຕາມ ມາດຕະຖານ ດັ່ງນີ້:

1. ມີອັດຕາສ່ວນ ຄອບຄົວ ແລະ ບ້ານ ວັດທະນະທຳ ກວມເອົາ ເກົ້າສິບຫ້າສ່ວນຮ້ອຍ ຂຶ້ນໄປ;

2. ມີອັດຕາສ່ວນ ກົມ, ກອງ, ສຳນັກງານ ແລະ ອົງການ ວັດທະນະທຳ ກວມເອົາ ເກົ້າສິບສ່ວນຮ້ອຍ ຂຶ້ນໄປ;

3. ມີລະບົບການຈັດຕັ້ງການເມືອງທີ່ເຂັ້ມແຂງ ແລະ ໄດ້ຮັບນາມມະຍົດໃນຂະບວນການຕ່າງໆ ທາງດ້ານວັດທະນະທຳ-ສັງຄົມ;

4. ມີພື້ນຖານໂຄງລ່າງດ້ານການຜະລິດ ແລະ ການບໍລິການ ທີ່ໜັກແໜ້ນ;

5. ມີການເຄື່ອນໄຫວກິດຈະກຳດ້ານວັດທະນະທຳ ສິລະປະວັນນະຄະດີ, ໂຫລະໂຄ່ງ, ສະໂມສອນວັດທະນະທຳ, ຫ້ອງສະໝຸດ, ຫ້ອງມູນເຊື້ອ, ຫໍຂ່າວ ຢ່າງເປັນປົກກະຕິ;

6. ເອົາໃຈໃສ່ປົກປັກຮັກສາ ແລະ ພັດທະນາມໍລະດົກວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ໃນຂອບເຂດເມືອງ, ນະຄອນ, ເທດສະບານ ຂອງຕົນ;

7. ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ;

8. ເສດຖະກິດ, ວັດທະນະທຳ ມີການຂະຫຍາຍຕົວ, ມີຜະລິດຕະພັນສິນຄ້າ ທີ່ເປັນເອກະລັກຂອງແຕ່ລະບ້ານແບບຍືນຍົງ;

## ໝວດທີ 3
## ຂັ້ນຕອນການສ້າງ, ການຈັດພິທີ, ການຄຸ້ມຄອງ ແລະ ກວດກາ, ການປະເມີນ, ການຢັ້ງຢືນ ແລະ ຮັບຮອງ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ

### ມາດຕາ 6 ຂັ້ນຕອນການສ້າງ, ການຈັດພິທີ, ການຄຸ້ມຄອງ ແລະ ກວດກາ

ບາດກ້າວ, ຂັ້ນຕອນ, ການຈັດພິທີ, ການຄຸ້ມຄອງ ແລະ ກວດກາ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ ແມ່ນໃຫ້ປະຕິບັດຄືກັບຂະບວນການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທຳ ສະບັບເລກທີ 123/ລບ, ລົງວັນທີ 16 ກຸມພາ 2021 ແລະ ປຶດແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທຳ ສະບັບເລກທີ 607/ຖວທ, ລົງວັນທີ 03 ທັນວາ 2021.

### ມາດຕາ 7 ການປະເມີນ

ການປະເມີນ ແມ່ນດຳເນີນເປັນ ສອງ ໄລຍະ ຄື:

- ໄລຍະທີໜຶ່ງ ຄະນະກຳມະການ ລົງກວດກາ, ປະເມີນຜົນ ຕາມມາດຕະຖານ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ ແມ່ນຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ, ເທດສະບານ ເປັນຜູ້ດຳເນີນການໂດຍອີງໃສ່ມາດຕະຖານ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ກ່ອນທີ່ຈະນຳສະເໜີຢັ້ງຢືນ ແລະ ຮັບຮອງ;
- ໄລຍະທີສອງ ພາຍຫຼັງທີ່ໄດ້ຮັບການຢັ້ງຢືນເປັນ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແລະ ເມືອງ, ນະຄອນ, ເທດສະບານ ວັດທະນະທຳ ແລ້ວ ຄະນະກຳມະການລົງກວດກາ, ປະເມີນຜົນຄືນ ໃນແຕ່ລະໄລຍະ ໂດຍການຢັ້ງຢືນຈາກ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ ເພື່ອນຳສະເໜີ ພິຈາລະນາຕົກລົງຍ້ອງຍໍດ້ວຍຮູບການຕ່າງໆ.

**ມາດຕາ 8 ການຢັ້ງຢືນ ແລະ ການຮັບຮອງ**

1. ການຢັ້ງຢືນ ແລະ ການຮັບຮອງ ບ້ານວັດທະນະທຳຕົວແບບ, ກົມ, ກອງ, ສຳນັກງານ, ອົງການ ວັດທະນະທຳ ແມ່ນ ຄະນະກຳມະການ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ, ເທດສະບານ ໂດຍຜ່ານການຢັ້ງຢືນຈາກ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເພື່ອນຳສະເໜີ ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ;

2. ການຢັ້ງຢືນ ແລະ ການຮັບຮອງ ເມືອງ, ນະຄອນ ແລະ ເທດສະບານ ວັດທະນະທຳ ແມ່ນຄະນະກຳມະການ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ, ເທດສະບານ ໂດຍຜ່ານການຢັ້ງຢືນຈາກ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ການຕົກລົງເຫັນດີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອນຳສະເໜີ ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມສິລະປະ-ວັດທະນະທຳ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ສວນສະຫວັນ ວິຍະເກດ